# ມິຊຊາອາທິດທີ 3 ກຳນົດພຣະກຣິສຕະຄົມ ປີ C
# ວັນອາທິດທີ 16 ທັນວາ 2018



**ພຣະວໍລະສານໂດຍນັກບຸນລູກາ 3, 10-18**

ໃນເວລານັ້ນ, ຝູງຊົນຖາມຍວງບັບຕິສຕາວ່າ: ພວກຂ້າພະເຈົ້າຈະຕ້ອງທຳຢ່າງໃດ? ຍວງຕອບວ່າ: ຜູ້ໃດມີເສື້ອສອງໂຕຈົ່ງປັນໃຫ້ຜູ້ບໍ່ມີ; ຜູ້ໃດມີກິນກໍຈົ່ງທຳດັ່ງດຽວກັນ.

ພວກເກັບສ່ວຍກໍມາຮັບພິທີລ້າງດ້ວຍ, ພວກເຂົາຖາມວ່າ: ທ່ານອາຈານ, ພວກຂ້າພະເຈົ້າຈະຕ້ອງທຳຢ່າງໃດ? ຍວງຕອບວ່າ: ພວກເຈົ້າຢ່າເກັບສ່ວຍເກີນອັດຕຣາເປັນອັນຂາດ. ຝ່າຍພວກທະຫານກໍຖາມວ່າ: ພວກຂ້າພະເຈົ້າເດຈະຕ້ອງທຳຢ່າງໃດ? ທ່ານຕອບວ່າ: ພວກເຈົ້າຢ່າຂົ່ມເຫັງຜູ້ໃດເລີຍ, ຢ່າແຈ້ງຄວາມເທັດໃສ່ຜູ້ອື່ນແລະໃຫ້ພໍໃຈໃນເງິນເດືອນຂອງຕົນ.

ປະຊາຊົນຜູ້ກຳລັງຄອງຖ້າຢູ່ ຕ່າງພາກັນຄຶດວ່າ ຍວງນີ້ອາດຈະແມ່ນພຣະກຣິສໂຕກໍບໍ່ຮູ້. ຍວງຈຶ່ງເວົ້າກັບພວກເຂົາວ່າ: ເຮົາລ້າງພວກເຈົ້າດ້ວຍນ້ຳເທົ່ານັ້ນ. ແຕ່ຍັງມີອີກຜູ້ໜຶ່ງຊົງອຳນາດກວ່າເຮົາພວມຈະມາ. ເຮົາເອງບໍ່ສົມຈະແກ້ສາຍເກີບຂອງພຣະອົງຊ້ຳ. ພຣະອົງນັ້ນຈະລ້າງພວກເຈົ້າໃນພຣະຈິດເຈົ້າແລະໄຟ. ພຣະອົງຈະຖືກະດົ້ງຝັດມາ ເພື່ອຝັດເຂົ້າໃນລານໃຫ້ສະອາດ ແລ້ວຂົນເຂົ້າດີຂຶ້ນໃສ່ເລົ້າ. ສ່ວນເຟືອງນັ້ນຈະເອົາໄປຖິ້ມໃສ່ໄຟອັນບໍ່ຮູ້ມອດ.

ທ່ານຍວງຍັງໄດ້ປະກາດຂ່າວປະເສີດໂດຍເຕືອນສອນປະຊາຊົນອີກຫລາຍຢ່າງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 3, 10-18**

ວັນອາທິດທີສາມແຫ່ງພຣະກາຣີສຕະຄົມນີ້ ເປັນອາທິດແຫ່ງຄວາມຊື່ນຊົມຍິນດີ ຍ້ອນວ່າອົງພຣະຜູ້ກູ້ໄຖ່ໃກ້ຈະສະເດັດມາແລ້ວ. ພຣະອົງມາເພື່ອນຳເອົາຄວາມຣອດ, ສັນຕິສຸກແລະຄວາມຍຸດຕິທຳມາໃຫ້ພວກເຮົາ. ແຕ່ພວກເຮົາຕ້ອງຕຽມຕົວຢ່າງໃດເພື່ອຈະສົມຕ້ອນຮັບພຣະຄຸນແຫ່ງຄວາມຣອດຜ່ານທາງອົງພຣະເຢຊູກຸມານເຂົ້າມາໃນຈິດໃຈຂອງພວກເຮົາ? ຄຳຖາມນີ້ເປັນບໍ່ພຽງແຕ່ພວກເຮົາໃນວັນນີ້ທີ່ຈະຕ້ອງຖາມຕົວເອງເທົ່ານັ້ນ ແຕ່ເປັນຄຳຖາມຂອງຄົນທຸກຍຸກທຸກສະໄໝ, ທຸກປະເພດ, ທຸກຊົນຊັ້ນວັນນະ. ດັ່ງທີ່ພວກເຮົາໄດ້ຍິນໃນວາຈາຂອງພຣະເຈົ້າວັນນີ້. ເມື່ອເວລາສິ້ນສຸດການເທດສອນຂອງຍວງບັບຕິສຕາໃນເຂດແມ່ນ້ຳຢໍແດນ ກໍມີຝູງຊົນ, ຄົນເກັບສ່ວຍແລະພວກທະຫານເຂົ້າມາຖາມທ່ານຍວງວ່າ: ພວກເຂົາຕ້ອງທຳຢ່າງໃດເພື່ອຈະໄດ້ຣອດ? ແລະຄຳຕອບຂອງທ່ານຍວງກໍເປັນຄຳຕອບທີ່ສອດຄ່ອງກັບໜ້າທີ່ວຽກງານຂອງແຕ່ລະຄົນໃນແຕ່ລະພາກສ່ວນຂອງສັງຄົມເຊັ່ນ: ຈົ່ງຮູ້ຈັກແບ່ງປັນ, ຈົ່ງຢູ່ໃນຄວາມຍຸດຕິທຳແລະຢ່າເອົາປຽບຄົນອື່ນ. ເປັນຫຍັງຈຶ່ງຕ້ອງແບ່ງປັນ? ຫລືເວົ້າອີກຢ່າງເປັນຫຍັງຈຶ່ງຕ້ອງຮັກຄົນອື່ນ? ຍ້ອນຄວາມຮັກເປັນບັນຍັດເອກທີ່ພຣະເຢຊູເຈົ້າໄດ້ສອນແລະຖ່າຍທອດໄວ້ໃຫ້ພວກເຮົາ. ແລະຍັງຍ້ອນຄວາມຮັກນີ້ທີ່ພຣະບິດາເຈົ້າສະຫວັນໄດ້ປະທານພຣະບຸດອົງດຽວຂອງພຣະອົງໃຫ້ພວກເຮົາ ເພື່ອເປັນຄ່າໄຖ່ບາບພວກເຮົາ. ແລະອົງພຣະຜູ້ກູ້ໄຖ່ຊຶ່ງພວກເຮົາລໍຖ້ານີ້ກໍເປັນອົງແຫ່ງຄວາມຮັກ. ພຣະອົງມາເພື່ອນຳເອົາຄວາມຮັກ, ສັນຕິສຸກແລະຄວາມຣອດມາໃຫ້ພວກເຮົາ. ດັ່ງນັ້ນຖ້າພວກເຮົາຢາກຕ້ອນຮັບພຣະເຈົ້າແຫ່ງຄວາມຮັກນີ້ເຂົ້າໃນດວງໃຈຂອງພວກເຮົາ, ພວກເຮົາຕ້ອງມີດວງໃຈທີ່ເຕັມດ້ວຍຄວາມຮັກ: ຮັກພຣະເຈົ້າແລະຮັກເພື່ອນພີ່ນ້ອງຂອງພວກເຮົາ.

ເປັນຫຍັງພວກເຮົາຈຶ່ງຕ້ອງຢູ່ໃນຄວາມຍຸດຕິທຳ? ຫລືເວົ້າອີກຢ່າງເປັນຫຍັງພວກເຮົາຈຶ່ງຕ້ອງຢູ່ໃນຄວາມຈິງ? ຍ້ອນພຣະວາຈານາດ, ພຣະບຸດຂອງພຣະເຈົ້າທີ່ລົງມາເກີດເປັນມະນຸດນີ້ ເປັນອົງແຫ່ງຄວາມຈິງ. ພຣະອົງມາເພື່ອທຳລາຍແອກຂອງຄວາມອະຍຸດຕິທຳ, ແອກຂອງຄວາມບໍ່ຈິງ ເພື່ອນຳມະນຸດກັບຄືນສູ່ຄວາມຈິງອັນແມ່ນອົງພຣະຜູ້ກູ້ໄຖ່ນັ້ນເອງ.

ເປັນຫຍັງຈຶ່ງຕ້ອງບໍ່ເອົາປຽບຄົນອື່ນ? ຍ້ອນພວກເຮົາແຕ່ລະຄົນລ້ວນແຕ່ເທົ່າທຽມກັນຕໍ່ໜ້າພຣະເຈົ້າ, ພວກເຮົາລ້ວນແຕ່ເປັນລູກຂອງພຣະອົງ ແລະເປັນຕົ້ນພວກເຮົາລ້ວນແຕ່ຕ້ອງການຄວາມຣອດ, ການໃຫ້ອະໄພຈາກພຣະອົງ. ດັ່ງນັ້ນ, ຖ້າພວກເຮົາຢາກໃຫ້ພຣະເຈົ້າຮັກພວກເຮົາ, ພວກເຮົາກໍຕ້ອງຮັກຄົນອື່ນເຊັ່ນດຽວກັນ. ຖ້າພວກເຮົາຢາກໃຫ້ພຣະເຈົ້າອະໄພໂທດໃຫ້ພວກເຮົາ, ພວກເຮົາກໍຕ້ອງໃຫ້ອະໄພແກ່ຄົນອື່ນເຊັ່ນດຽວກັນ.

ສິ່ງທີ່ກ່າວມາຂ້າງເທິງນີ້ຈະຊ່ວຍພວກເຮົາໃຫ້ຕຽມພ້ອມຕ້ອນຮັບພຣະຜູ້ກູ້ໄຖ່ທີ່ຈະສະເດັດມາ. ພຣະອົງນີ້ແລຈະເປັນຄວາມຊື່ນຍິນດີຂອງພວກເຮົາແລະຣອດຂອງພວກເຮົາໃນວັນບຸນໂນແອນ, ບຸນນາຕັນທີ່ຈະມາເຖິງນີ້. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ